ເລກທີ 1474
ວັນທີ 19/4/17

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

---

**ຫ້ອງວ່າການສໍານັກງານນາຍົກລັດຖະມົນຕີ** ເລກທີ 584/ຫສນຍ.ກລຂ

ນະຄອນຫຼວງວຽງຈັນ, ວັນທີ 12.4.2017

ແຈ້ງການ

ຮຽນ : - ທ່ານ ລັດຖະມົນຕີກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ.
- ທ່ານ ເຈົ້າຄອງນະຄອນຫຼວງວຽງຈັນ ແລະ ບັນດາທ່ານເຈົ້າແຂວງ.

ເລື່ອງ : ການອະນຸມັດໃຫ້ສ້າງຕັ້ງສູນບໍລິການຕູ້ເກມ (Slot Machine) ໃນຂອບເຂດທົ່ວປະເທດ.

- ອີງຕາມການຊີ້ນຳ ແລະ ຕົກລົງໃນກອງປະຊຸມນາຍົກ-ຮອງນາຍົກລັດຖະມົນຕີ ຄັ້ງວັນທີ 10 ເມສາ 2017.

ຫ້ອງວ່າການສໍານັກງານນາຍົກລັດຖະມົນຕີ ຂໍຖືເປັນກຽດແຈ້ງມາຍັງທ່ານຊາບ ດັ່ງນີ້:

**ມອບໃຫ້ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ອອກແຈ້ງການເຖິງພະແນກຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວແຂວງ ແລະ ນະຄອນຫຼວງວຽງຈັນ ໃນຂອບເຂດທົ່ວປະເທດ ຫ້າມບໍ່ໃຫ້ອອກໃບອະນຸຍາດສ້າງຕັ້ງສູນບໍລິການຕູ້ເກມໄຟຟ້າ (Slot Machine) ຢ່າງເດັດຂາດ, ຖ້າມີການອະນຸຍາດຢູ່ແຂວງໃດ ກໍໃຫ້ເລີກຮື້ ແລະ ປິດກິດຈະການດັ່ງກ່າວ ຢ່າງບໍ່ມີເງື່ອນໄຂ.**

- **ສຳລັບການອະນຸມັດໃຫ້ດຳເນີນກິດຈະການປະເພດດັ່ງກ່າວ ມີແຕ່ລັດຖະບານ ເປັນຜູ້ອະນຸມັດ ແລະ ບໍ່ອະນຸຍາດໃຫ້ຂະແໜງການໃດ ຕົກລົງອະນຸມັດຢ່າງເດັດຂາດ.**

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານ ເພື່ອຊາບ ແລະ ຈັດຕັ້ງປະຕິບັດເນື້ອໃນຂ້າງເທິງໃຫ້ໄດ້ຮັບຜົນດີ.

ລັດຖະມົນຕີ,

**ຫົວໜ້າຫ້ອງວ່າການສໍານັກງານນາຍົກລັດຖະມົນຕີ**

ສໍານັກງານນາຍົກລັດຖະມົນຕີ
ລັດຖະມົນຕີ, ຫົວໜ້າຫ້ອງວ່າການ

**ເພັດ ພົມພິພັກ**

**ບ່ອນນຳສົ່ງ :**

- ນາຍົກ-ຮອງນາຍົກລັດຖະມົນຕີ 04 ສະບັບ
- ຫ້ອງວ່າການສູນກາງພັກ 01 ສະບັບ
- ກົມເລຂາ 01 ສະບັບ
- ສຳເນົາ 08 ສະບັບ